# ຂໍ້ມູນການສັກຢາປ້ອງກັນພະຍາດ COVID-19 ສໍາລັບຄົນຕ່າງປະເທດທີ່ອາໄສຢູ່ໃນເກົາຫຼີ

**ການຈອງລ່ວງໜ້າແມ່ນດໍາເນີນຕາມມາດຕະຖານແລະຂັ້ນຕອນດຽວກັນໂດຍບໍ່ ຈໍາແນກລະຫວ່າງປະຊາຊົນພາຍໃນປະເທດ ແລະຊາວຕ່າງປະເທດທີ່ອາໄສຢູ່ເກົາຫລີ. ຈອງກ່ອນສໍາລັບການສັກຢາວັກຊີນ COVID-19 ໂດຍການໝາຍຂີດໄຂວໃສ່ຜູ້ຮັບ ແລະວິທີການຈອງຂ້າງລຸ່ມນີ້.**

□ ຜູ້ຮັບການສັກຢາປ້ອງກັນແລະວິທີການຈອງ

◦ ສໍາລັບຄົນຕ່າງປະເທດທີ່ລົງທະບຽນຄົນຕ່າງດ້າວ

- ການສັກຢາວັກຊີນສາມາດ ສະເໜີຂໍຕາມລໍາດັບອີງຕາມແຜນການສັກຢາກັນພະຍາດເດືອນສິງຫາ ຫາ ເດືອນກັນຍາ ສໍາລັບແຜນການ ແຕ່ລະເປົ້າໝາຍ, ແລະສາມາດສັ່ງຈອງຜ່ານທາງອອນໄລ ຫຼືທາງໂທລະສັບ.

* ຖ້າການຈອງທາງອອນໄລ ຫາກສະແດງວ່າ ທ່ານບໍ່ມີສິດໄດ້ຮັບ, ທ່ານສາມາດເຂົ້າໄປຫາສູນສຸຂະພາບສາທາລະນະທ້ອງຖິ່ນ ແລະຈອງບ່ອນ ຫຼັງຈາກທີ່ໄດ້ລົງທະບຽນເປັນຜູ້ສະໝັກ.

**- ວິທີການສັ່ງຈອງ-**

◦ **(ອອນໄລນ-ທ່ານເອງ ແລະຕົວແທນຂອງທ່ານ)** ເຂົ້າຫາລະບົບການຈອງການສັກຢາປ້ອງກັນ COVID -19 ລ່ວງໜ້າ (http://ncvr2.kdca.go.kr) ແລະດໍາເນີນການຈອງໄດ້.

◦ **(ໂທລະສັບ - ທ່ານເອງ ແລະຕົວແທນຂອງທ່ານ)** ກວດເບິ່ງນໍ້າເບີໝາຍເລກການປຶກສາ ສໍາລັບການຈອງ ຂອງແຕ່ລະລັດຖະບານທ້ອງຖິ່ນທີ່ສູນຄວບຄຸມແລະປ້ອງກັນພະຍາດ ຂອງເກົາຫຼີ (1339) ຫຼືລະບົບການຈອງລ່ວງໜ້າ ການສັກວັກຊີນປ້ອງກັນ COVID -19 (ສະຖານະພາບການສັກຢາ (ເລື່ອນເມົ້າຂຶ້ນ) →ຄລິກໃສ່ ເບີການຈອງທາງໂທລະສັບ ການສັກຢາປ້ອງກັນ COVID -19).

◦ ຄົນຕ່າງປະເທດທີ່ບໍ່ມີເລກທະບຽນຄົນຕ່າງດ້າວ (ບັດທະບຽນ) (ລວມທັງຄົນຕ່າງດ້າວທີ່ຜິດກົດໝາຍ)

- ເຂົ້າໄປຫາສູນສາທາລະນະສຸກແລະອອກບັດນໍ້າເບີການຄຸ້ມຄອງຊົ່ວຄາວພ້ອມກັບ ໜັງ ສືເດີນທາງຂອງທ່ານແລະລົງທະບຽນການຈອງ

* ຄົນຕ່າງປະເທດທີ່ບໍ່ມີ ໜັງສືເດີນທາງທີ່ຖືກຕ້ອງ ຕ້ອງສະແດງ ໜັງ ສືເດີນທາງທີ່ໝົດອາຍຸ, ບັດທະບຽນ ຄົນຕ່າງດ້າວທີ່ ໝົດກໍານົດ ອະນຸຍາດໃຫ້ຢູ່ຊົ່ວຄາວ ແລະເອກະສານທີ່ຢືນຢັນຕົວຕົນທີ່ອອກໃຫ້ໂດຍ ກົງສູນ ຂອງເກົາຫລີ ຢູ່ໃນປະເທດເກົາຫຼີ.

- ສາມາດອອກເລກນໍ້ເບີ ການຄຸ້ມຄອງຊົ່ວຄາວໄດ້ ຖ້ານາຍຈ້າງຫາກແຈ້ງຂໍ້ມູນສ່ວນຕົວເຊັ່ນ (ຊື່, ວັນເດືອນປີເກີດ, ເພດ, ສັນຊາດ, ທີ່ຢູ່/ບ່ອນເຮັດວຽກ, ແລະອື່ນ) ຂອງຄົນງານຕ່າງປະເທດນັ້ນ.

- ຫຼັງຈາກການອອກເລກນໍ້ເບີການຄຸ້ມຄອງຊົ່ວຄາວແລ້ວ, ມີຄວາມສາມາດເປັນໄປໄດ້ທີ່ຈະສະຫມັກຂໍການຈອງ ການສັກຢາທາງອອນລາຍ ຫຼືທາງໂທລະສັບ (ການຈອງໂດຍຕົວແທນຕາງໜ້າ)

※ບໍ່ລວມເອົາ ຜູ້ຢູ່ອາໄສໄລຍະສັ້ນ 90 ວັນຫຼື ໜ້ອຍ ກວ່າ, ຜູ້ທີ່ໄດ້ເດີນທາງເຂົ້າໄປເກົາຫຼີເພື່ອຈຸດປະສົງ ທ່ອງທ່ຽວ.

□ **ແຈ້ງການ**

◦ **ຂໍ້ມູນການລະບຸຕົວຕົນແມ່ນໃຊ້ເພື່ອຈຸດປະສົງການສັກຢາປ້ອງກັນເທົ່ານັ້ນ, ແລະຄວາມຈິງຂອງການຢູ່ແບບບໍ່ຖືກຕ້ອງຕາມກົດໝາຍ ບໍ່ໄດ້ແຈ້ງໃຫ້ຫ້ອງການກວດຄົນເຂົ້າເມືອງ ຫຼືຫ້ອງການກວດຄົນເຂົ້າເມືອງອີງຕາມລະບົບແຈ້ງການບໍ່ເສຍພາສີ.**

◦ **ສະຖານທີ່ສັກຢາວັກຊີນອາດຈະຖືກ ຈຳກັດໂດຍຂຶ້ນກັບວ່າບຸກຄົນນັ້ນມີປະກັນໄພສຸຂະພາບຫຼືບໍ່.**

◦ຜູ້ທີ່ບໍ່ມີປະກັນໄພສຸຂະພາບສາມາດສັກຢາກັນພະຍາດໄດ້ຢູ່ທີ່ສູນສຸຂະພາບສາທາລະນະຫຼືສູນສັກຢາພູມຄຸ້ມກັນ

* ການສັກຢາປ້ອງກັນພະຍາດບໍ່ອະນຸຍາດໃຫ້ສັກຢູ່ສະຖາບັນການແພດເຊັ່ນ: ໂຮງໝໍແລະຄລີນິກ

<ການແປພາສານີ້ໄດ້ເຮັດຢູ່ທີ່ສູນກາງໂທລະສັບ ດານູຣີ 1577-1366>